ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກອຸດສາຫະກຳ ແລະ ການຄ້າ

1323

ເລກທີ............./ອຄ.ນວ.ຄພນ

ລົງວັນທີ....19.... ກັນຍາ 2021

# ແຈ້ງການແນະນຳ

**ເຖິງ:** - ຫ້ອງການອຸດສາຫະກຳ ແລະ ການຄ້າ 09 ຕົວເມືອງ ໃນນະຄອນຫຼວງວຽງຈັນ.

- ຜູ້ອຳນວຍການ, ຜູ້ຈັດການ, ເຈົ້າຂອງວິສາຫະກິດ ບໍລິສັດຂາອອກ-ຂາເຂົ້າ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານຄ້າຂູບເປີມາກ-ມິນິມາກ, ຕະຫຼາດ, ຮ້ານຄ້າຂາຍຍົກ-ຂາຍຍ່ອຍທົ່ວໄປ ແລະ ປ້ຳນ້ຳມັນເຊື້ອໄຟຢູ່ນະຄອນຫຼວງວຽງຈັນ.
- ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າ ທີ່ຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ປະຕິບັດ ບັນດາມາດຕະການເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດໂຄວິດ-19 (COVID-19) ແລະ ການບໍລິການ ຊື້-ຂາຍ ສິນຄ້າ ອຸປະໂພກ, ບໍລິໂພກ ແລະ ເຄື່ອງໃຊ້ສອຍປະຈຳວັນ ທີ່ຈຳເປັນ ໃນໄລຍະ ແຕ່ວັນທີ 20 - 30 ກັນຍາ 2021.

- ອີງຕາມຄຳສັ່ງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21.04.2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 (COVID-19).
- ອີງຕາມແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1177 /ຫສນຍ, ລົງວັນທີ 15 ກັນຍາ 2021 ກ່ຽວກັບ ການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການລະບາດຂອງພະຍາດ COVID-19 ໃນໄລຍະ ວັນທີ 16 ຫາ 30 ກັນຍາ 2021.
- ອີງຕາມຄຳສັ່ງ ຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 016/ຈນວ, ລົງວັນທີ 19 ກັນຍາ 2021 ວ່າດ້ວຍມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນແຕ່ວັນທີ 19 - 30 ກັຍາ 2021.

ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫລວງວຽງຈັນ ອອກແຈ້ງການແນະນຳໃຫ້ປະຕິບັດດັ່ງນີ້:

1. ເລີ່ມແຕ່ວັນທີ 20 - 30 ກັນຍາ 2021 ໃຫ້ບັນດາຫົວໜ່ວຍວິສາຫະກິດ ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານຄ້າຊູບເປີມາກ-ມິນິມາກ, ຕະຫຼາດກາງຄືນ ແລະ ບັນດາຫ້າງຮ້ານດັ່ງນີ້: ຮ້ານຈຳໜ່າຍເຄື່ອງນຸ່ງຫົ່ມ, ຮ້ານຈຳໜ່າຍເຄື່ອງກໍ່ສ້າງ, ຮ້ານຈຳໜ່າຍເຄື່ອງໃຊ້ຄົວເຮືອນ, ຮ້ານຈຳໜ່າຍເຄື່ອງສຳອາງ, ຮ້ານຈຳໜ່າຍເຄື່ອງໃຊ້ໄຟຟ້າ, ຮ້ານຈຳໜ່າຍໂທລະສັບ ແລະ ຮ້ານຄ້າຂາຍຍົກ-ຂາຍຍ່ອຍທົ່ວໄປ ຢູ່ນະຄອນຫຼວງວຽງຈັນ ແມ່ນໃຫ້ປິດການໃຫ້ບໍລິການ ຊົ່ວຄາວຕາມກຳນົດໄລຍະເວລາຂ້າງເທິງນີ້.

- ຕະຫຼາດ ແມ່ນໃຫ້ເປີດຂາຍສະເພາະແຕ່ຮ້ານຄ້າທີ່ຂາຍສິນຄ້າ ປະເພດ: ສິນຄ້າກະສິກຳ, ອາຫານສົດ, ອາຫານແຫ້ງ, ເຄື່ອງປຸງແຕ່ງອາຫານ ແລະ ອາຫານຊື້ກັບບ້ານ ກຳນົດເວລາເປີດ-ປິດແຕ່ 6:00 ໂມງ - 18:00 ໂມງ ແຕ່ໃຫ້ປະຕິບັດມາດຕະການໄລຍະຫ່າງ ແຕ່ 01 ແມັດ ຂຶ້ນໄປ. ສ່ວນການບໍລິການ ຫຼື ຮ້ານຂາຍສິນຄ້າປະເພດອື່ນໆຢູ່ໃນຕະຫຼາດ ທີ່ບໍ່ຈຳເປັນແມ່ນໃຫ້ປິດຊົ່ວຄາວ.
- ປ້ຳນ້ຳມັນເຊື້ອໄຟ: ແມ່ນໃຫ້ເປີດບໍລິການຕາມປົກກະຕິ ແຕ່ໃຫ້ເຂັ້ມງວດການປະຕິບັດມາດຕະການປ້ອງກັນເຊື້ອພະຍາດໂຄວິດ-19 ກຳນົດເວລາເປີດ-ປິດແຕ່ 6:00 ໂມງ - 18:00 ໂມງ.

2. ທຸກຫົວໜ່ວຍວິສາຫະກິດ ທີ່ດຳເນີນທຸລະກິດການຈຳໜ່າຍສິນຄ້າ ໃຫ້ປະຕິບັດມາດຕະການປ້ອງກັນ ຢ່າງເຂັ້ມງວດ, ຜູ້ໃຫ້ບໍລິການຕ້ອງໄດ້ຮັບວັກຊີນຄົບໂດສ ແລະ ຕ້ອງໄດ້ຂໍອະນຸຍາດການເຂົ້າ-ອອກ ນຳອຳນາດການປົກຄອງບ້ານ.

3. ຫ້າມສວຍໂອກາດຂຶ້ນລາຄາສິນຄ້າ ແລະ ຄ່າບໍລິການ ຕາມລຳພັງໃຈ, ກັກຕຸນສິນຄ້າ ທີ່ເປັນການເອົາປຽບຜູ້ບໍລິໂພກໂດຍບໍ່ຊອບທຳ ແລະ ຈຳໜ່າຍສິນຄ້າທີ່ບໍ່ປອດໄພທາງດ້ານຄຸນນະພາບເປັນອັນຂາດ. ການຈຳໜ່າຍສິນຄ້າໃຫ້ຜູ້ຊົມໃຊ້ໃນແຕ່ລະຄັ້ງແມ່ນໃຫ້ຕອບສະໜອງໃນປະລິມານທີ່ເໝາະສົມ, ບໍ່ໃຫ້ຜູ້ຊົມໃຊ້ຊື້ສິນຄ້າເປັນຈຳນວນຫຼາຍ ເພື່ອໄປກັກຕຸນ. ຫ້າມຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ ແລະ ຫ້າມຊື້-ຂາຍ ຊະຊາຍຕາມແຄມທາງ ແລະ ກາງຖະໜົນ, ເສັ້ນທາງ, ຂາຍນອກສະຖານທີ່ ທີ່ອະນຸຍາດ ຢ່າງເດັດຂາດ.

4. ສຳລັບຫົວໜ່ວຍວິສາຫະກິດໃດ ທີ່ໄດ້ລະເມີດມາດຕະການປ້ອງກັນພະຍາດໂຄວິດ-19, ໂດຍບໍ່ມີການຕັ້ງຈຸດກວດກາຢູ່ບໍລິເວນທາງເຂົ້າ, ບໍ່ມີການວັດແທກອຸນນະພູມ, ບໍ່ມີນ້ຳຢາລ້າງມືແບບລ້າງແຫ້ງ ຫຼື ລ້າງມືແບບປຽກ ຫຼື ບໍ່ແນະນຳໃຫ້ໃສ່ຜ້າປິດປາກ-ດັງ ແມ່ນຈະຖືກປັບໃໝ 10.000.000 ກີບ/ຄັ້ງ ຫຼື ມອບໃຫ້ເຈົ້າໜ້າທີ່ ເພື່ອລົງໂທດຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງແລ້ວແຕ່ກໍລະນີ, ກ້າວໄປເຖິງການຖອນໃບອະນຸຍາດດຳເນີນທຸລະກິດ ແລະ ໃຫ້ປິດກິດຈະການດັ່ງກ່າວຢ່າງຖາວອນ. ຖ້າບຸກຄົນໃດ ບໍ່ປະຕິບັດມາດຕະການປ້ອງກັນພະຍາດໂຄວິດ-19 ເຊັ່ນ ຢູ່ທາງເຂົ້າຕະຫຼາດ: ການວັດແທກອຸນຫະພູມ, ລ້າງມືແບບລ້າງແຫ້ງ ຫຼື ລ້າງມືແບບປຽກ, ໃສ່ຜ້າປິດປາກ-ດັງ ແລະ ການປະຕິບັດໄລຍະຫ່າງກັນແຕ່ 01 ແມັດຂຶ້ນໄປ) ແມ່ນຈະຖືກປັບໃໝ 3.000.000 ກີບ/ຄົນ/ຄັ້ງ.

5. ບໍ່ຕິດປ້າຍລາຄາສິນຄ້າ, ແຈ້ງຂໍ້ມູນບໍ່ຖືກຕ້ອງກັບຄວາມຈິງກ່ຽວກັບໂຄງປະກອບລາຄາ ຫຼື ຄັງແຮສຳຮອງ, ບໍ່ແຈ້ງໂຄງປະກອບລາຄາ, ນຳເອົາສິນຄ້າໃນຄັງແຮອອກຈຳໜ່າຍໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະຄຸ້ມຄອງລາຄາ, ຢຸດ-ປະຕິເສດ ຫຼື ແກ່ຍາວເວລາການຈຳໜ່າຍສິນຄ້າ ຫຼື ການບໍລິການ ໂດຍບໍ່ມີເຫດຜົນ, ນຳໃຊ້ໂຄງປະກອບລາຄາໂດຍບໍ່ໄດ້ຮັບອະນຸຍາດ ແລະ ບັນດາຂໍ້ຫ້າມອື່ນໆທີ່ກຳນົດໄວ້ໃນຂໍ້ 4 ຂອງແຈ້ງການແນະນຳສະບັບນີ້ ໃຫ້ປັບໃໝແຕ່: 500.000 ກີບ - 5.000.000 ກີບ/ຄັ້ງ/ລາຍການ.

6. ແຈ້ງການແນະນຳ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງການແນະນຳມາຍັງບັນດາທ່ານເພື່ອຮັບຊາບ ແລະ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

**ຫົວໜ້າພະແນກ**

ພະແນກ ອຸດສາຫະກຳ ແລະ ການຄ້າ
ກະຊວງອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ

ນ. ວັນນະນີ ພົມມະສານ

**ບ່ອນສົ່ງ:**
- ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອລາຍງານ
- ກົມການຄ້າພາຍໃນ ກະຊວງ ອຄ ເພື່ອລາຍງານ
- ທ່ານເຈົ້າເມືອງ 9 ຕົວເມືອງ ເພື່ອຊາບ ແລະ ຊີ້ນຳ ໃນການຈັດຕັ້ງປະຕິບັດ
- ຫ້ອງວ່າການປົກຄອງ ນະຄອນຫລວງວຽງຈັນ ເພື່ອລາຍງານ
- ຫ້ອງການ ປກສ ນວ ເພື່ອລາຍງານ ແລະ ຈັດຕັ້ງປະຕິບັດ.
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເພື່ອກວດກາ ແລະ ປະຕິບັດ
- ນາຍບ້ານ ທີ່ມີຫົວໜ່ວຍວິສາຫະກິດຕັ້ງຢູ່ ເພື່ອຕິດຕາມກວດກາ, ປະຕິບັດ ແລະ ລາຍງານ